ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3153 /ກງ

ນະຄອນຫຼວງວຽງຈັນ, ວັນທີ 29 ກໍລະກົດ 2019.

# ຄໍາແນະນໍາ

# ກ່ຽວກັບ ການຄຸ້ມຄອງ ແລະ ບໍລິຫານແຫຼ່ງເງິນ ໃນລະບົບຄັງເງິນແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ດໍາລັດວ່າດ້ວຍ ຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 01 ມິຖຸນາ 2010;
- ອີງຕາມ ດໍາລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017.

## ລັດຖະມົນຕີກະຊວງການເງິນ ອອກຄໍາແນະນໍາ ດັ່ງນີ້ :

### I. ຈຸດປະສົງ ແລະ ລະດັບຄາດໝາຍ

ຄໍາແນະນໍາ ສະບັບນີ້ ວາງອອກເພື່ອເປັນການຜັນຂະຫຍາຍເນື້ອໃນ ມາດຕາ 12 ໝວດທີ 3 ຂອງ ດໍາລັດ ວ່າດ້ວຍ ຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 1 ມິຖຸນາ 2010 ໃຫ້ເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດໄດ້; ສາມາດອະທິບາຍ, ແນະນໍາ, ຫຼັກການ, ຂັ້ນຕອນ ແລະ ວິທີການບໍລິຫານແຫຼ່ງເງິນໃນລະບົບຄັງເງິນ ແນໃສ່ບໍລິຫານແຫຼ່ງເງິນຂອງລັດໃຫ້ມີຄວາມຄ່ອງຕົວ, ແທດເໝາະກັບກະແສເງິນ ເຂົ້າ-ອອກ ໃນລະບົບບັນຊີເງິນຝາກຄັງເງິນ, ຮັບປະກັນການປະຕິບັດລາຍຈ່າຍຕາມແຜນງົບປະມານປະຈໍາປີໃຫ້ມີຄວາມຮັດກຸມ, ປະສິດທິຜົນ, ວ່ອງໄວ, ສາມາດກວດກາ, ກວດສອບໄດ້ ແລະ ສາມາດລວມສູນທຸກແຫຼ່ງເງິນຂອງລັດ ເຂົ້າໃນລະບົບຄັງເງິນແຫ່ງຊາດ ຜ່ານລະບົບທະນາຄານ; ເພື່ອເປັນຂໍ້ມູນໃນການສັງລວມລາຍງານໃຫ້ຄະນະນໍາທຸກຂັ້ນ ແລະ ຈັດຕັ້ງປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ.

### II. ຂອບເຂດການນໍາໃຊ້

ຄໍາແນະນໍາສະບັບນີ້ນໍາໃຊ້ສໍາລັບ ບັນດາຫົວໜ່ວຍງົບປະມານ ຂັ້ນ ສູນກາງ ແລະ ທ້ອງຖິ່ນ, ກົມງົບປະມານແຫ່ງລັດ, ຂະແໜງງົບປະມານຂັ້ນທ້ອງຖິ່ນ, ຂະແໜງການຈັດເກັບລາຍຮັບ ສູນກາງ ແລະ ທ້ອງຖິ່ນ, ຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດປະຈໍາທ້ອງຖິ່ນ, ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ທີ່ໃຫ້ບໍລິການ.

### III. ອະທິບາຍຄໍາສັບ

ຄໍາສັບຕ່າງໆ ທີ່ຢູ່ໃນຄໍາແນະນໍາສະບັບນີ້ ມີຄວາມໝາຍດັ່ງນີ້ :

- **ແຫຼ່ງເງິນຂອງລັດ:** ໝາຍເຖິງ ງົບປະມານແຫ່ງລັດ ຊຶ່ງປະກອບມີ : ແຫຼ່ງດຸ່ນດ່ຽງ, ເງິນກູ້ຢືມ, ເງິນຊ່ວຍເຫຼືອທາງການເພື່ອການພັດທະນາຈາກ ພາຍໃນ ແລະ ຕ່າງປະເທດ, ຄັງກອງທຶນຂອງລັດ, ຄັງຂອງຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ເງິນຝາກວິສາຫະກິດຂອງລັດ ໃນລະບົບຄັງເງິນແຫ່ງຊາດ;

- **ຂະແໜງການຈັດເກັບລາຍຮັບ:** ໝາຍເຖິງ ຂະແໜງການການເງິນ ທີ່ມີໜ້າທີ່ຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດ ເຊັ່ນ: ພາສີ, ສ່ວຍສາອາກອນ, ຄຸ້ມຄອງຊັບສິນຂອງລັດ ແລະ ຄຸ້ມຄອງ, ພັດທະນາວິສາຫະກິດ ແລະ ການປະກັນໄພ;
- **ການບໍລິຫານແຫຼ່ງເງິນ:** ໝາຍເຖິງ ການຄຸ້ມຄອງ ແລະ ນໍາໃຊ້ທຸກແຫຼ່ງເງິນໃນລະບົບຄັງເງິນແຫ່ງຊາດ ເພື່ອຕອບສະໜອງ ລາຍຈ່າຍ ງົບປະມານ-ຄັງເງິນ ໃຫ້ມີຄວາມຄ່ອງຕົວ;
- **ການລົງທຶນດ້ານການເງິນ:** ໝາຍເຖິງ ການນໍາໃຊ້ແຫຼ່ງເງິນຂອງຄັງເງິນແຫ່ງຊາດ ເພື່ອລົງທຶນດ້ວຍຮູບການ ປ່ອຍກູ້, ຊື້ຮຸ້ນ, ຊື້ພັນທະບັດໃນຕະຫຼາດຫຼັກຊັບ ແລະ ຝາກແບບມີກໍານົດ ເພື່ອໃຫ້ມີຜົນກໍາໄລ;
- **ການຈັດສັນແຫຼ່ງເງິນ:** ໝາຍເຖິງ ການແບ່ງປັນຕົວເລກລາຍຈ່າຍຕາມ ໃບຖອນເງິນ ແລະ ໃບຄໍາສັ່ງຈ່າຍເງິນ ເພື່ອໃຫ້ ສອດຄ່ອງກັບຍອດເງິນໃນບັນຊີ ບວກກັບການຄາດຄະເນລາຍຮັບທີ່ເກີດຂຶ້ນ ເປັນແຕ່ລະ ອາທິດ ຫຼື ເດືອນ;
- **ຍອດເຫຼືອບັນຊີເງິນຝາກ ຢູ່ທະນາຄານ:** ໝາຍເຖິງ ຍອດເຫຼືອເງິນທີ່ມີຢູ່ບັນຊີເງິນຝາກງົບປະມານແຫ່ງລັດ ແລະ ບັນຊີ ເງິນຝາກຮອງຮັບໜີ້ຕ້ອງສົ່ງ;
- **ເງິນຢູ່ໃນບັນຊີເງິນຝາກງົບປະມານແຫ່ງລັດ:** ໝາຍເຖິງ ເງິນທີ່ເກັບລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ, ລາຍຮັບທີ່ ບໍ່ແມ່ນຈາກ ພາສີ ແລະ ສ່ວຍສາອາກອນ, ລາຍຮັບຈາກການຊ່ວຍເຫຼືອລ້າ, ລາຍຮັບຈາກການປະກອບສ່ວນຂອງສັງຄົມ;
- **ເງິນຢູ່ໃນບັນຊີເງິນຝາກຮອງຮັບໜີ້ຕ້ອງສົ່ງ:** ໝາຍເຖິງ ເງິນຝາກຂອງບັນດາຫົວໜ່ວຍງົບປະມານ, ກອງທຶນຂອງລັດ, ເງິນ ຄໍ້າປະກັນ ແລະ ເງິນມັດຈໍາ ຢູ່ໃນລະບົບຄັງເງິນແຫ່ງຊາດ;
- **ກອງທຶນຂອງລັດ:** ໝາຍເຖິງ ກອງທຶນຂອງລັດທີ່ມາເປີດບັນຊີເງິນຝາກໃນລະບົບຄັງເງິນແຫ່ງຊາດ ເຊັ່ນ: ກອງທຶນທາງ, ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ (ພາກລັດຖະກອນ), ກອງທຶນພັດທະນາປ່າໄມ້ ແລະ ກອງທຶນປົກປັກຮັກສາ ສິ່ງແວດລ້ອມ ແລະ ອື່ນໆ;
- **ບັນຊີລວມສູນຄັງເງິນ:** ໝາຍເຖິງ ບັນຊີທີ່ເປີດຢູ່ບັນດາທະນາຄານທີ່ໃຫ້ບໍລິການ ເພື່ອລວມສູນທຸກແຫຼ່ງເງິນຂອງລັດ ພາຍໃຕ້ການຄຸ້ມຄອງຂອງ ຄັງເງິນແຫ່ງຊາດ.

## IV. ຫຼັກການພື້ນຖານ ໃນການບໍລິຫານແຫຼ່ງເງິນ

ເພື່ອຮັບປະກັນໃນການບໍລິຫານແຫຼ່ງເງິນຢູ່ລະບົບຄັງເງິນ ໃຫ້ມີປະສິດທິພາບ ແລະ ຄ່ອງຕົວ ໃຫ້ປະຕິບັດຕາມ ຫຼັກການດັ່ງນີ້ :

- ແຫຼ່ງເງິນຂອງລັດ ຕ້ອງຄຸ້ມຄອງລວມສູນເຂົ້າງົບປະມານແຫ່ງລັດ ໂດຍຜ່ານລະບົບບັນຊີຄັງເງິນ;
- ການບໍລິຫານແຫຼ່ງເງິນໃນລະບົບຄັງເງິນ ຕ້ອງມີຄວາມຄ່ອງຕົວ, ຍຸຕິທໍາ, ໂປ່ງໃສ ແລະ ກວດສອບໄດ້;
- ຮັບປະກັນການສະໜອງລາຍຈ່າຍງົບປະມານແຫ່ງລັດ ໃຫ້ໄດ້ຕາມແຜນການ ຫຼື ແຜນບູລິມະສິດຂອງລັດຖະບານ;
- ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕາມລະບົບສາຍຕັ້ງຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ;
- ຮັບປະກັນການສະຫຼຸບສັງລວມ ແລະ ລາຍງານ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ທັນຕາມກໍານົດເວລາ.

## V. ການຄຸ້ມຄອງ-ບໍລິຫານແຫຼ່ງເງິນ ໃນລະບົບຄັງເງິນ

### 1. ການຄຸ້ມຄອງແຫຼ່ງເງິນຂອງລັດ

ແຫຼ່ງເງິນຂອງລັດ ຕ້ອງຄຸ້ມຄອງລວມສູນໃນລະບົບຄັງເງິນແຫ່ງຊາດ ແລະ ບັນທຶກບັນຊີຜ່ານລະບົບຄັງເງິນແຫ່ງຊາດ, ສາມາດນໍາໃຊ້ທຸກແຫຼ່ງເງິນຂອງລັດທີ່ມີໃນລະບົບຄັງເງິນແຫ່ງຊາດ ໃນການບໍລິຫານກະແສເງິນໃຫ້ມີຄວາມຄ່ອງຕົວ ເພື່ອ ຕອບສະໜອງລາຍຈ່າຍງົບປະມານຕາມແຜນສະພາແຫ່ງຊາດ ຮັບຮອງ ປະຈໍາ ງວດ, ທຸກເດືອນ ແລະ ປີ ໂດຍສະເພາະແມ່ນ ລາຍຈ່າຍທີ່ເປັນ ບູລິມະສິດຂອງລັດຖະບານ.

2. ບັນຊີລວມສູນຄັງເງິນ ( Treasury Single Account )

ບັນຊີລວມສູນຄັງເງິນ ທີ່ເປີດຢູ່ບັນດາທະນາຄານທີ່ໃຫ້ບໍລິການ ແມ່ນເພື່ອລວມສູນແຫຼ່ງເງິນຂອງລັດ ທີ່ສາມາດສັງລວມ ແລະ ຮູ້ໄດ້ຍອດເງິນເຫຼືອໃນແຕ່ລະທ້າຍມື້, ຊຶ່ງການເຄື່ອນໄຫວຍອດເຫຼືອບັນຊີເງິນຝາກຄັງເງິນ ຢູ່ບັນດາທະນາຄານ ທີ່ໃຫ້ບໍລິການ ຕ້ອງລາຍງານໃຫ້ຄັງເງິນແຫ່ງຊາດ ຮັບຊາບໃນມື້ຖັດໄປ ເພື່ອສາມາດນຳໃຊ້ເຂົ້າໃນການບໍລິຫານແຫຼ່ງເງິນໃຫ້ຖືກເປົ້າໝາຍການໃຊ້ຈ່າຍງົບປະມານຂອງລັດໃຫ້ມີປະສິດທິຜົນ.

3. ການຄາດຄະເນ ລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ

ຄັງເງິນແຫ່ງຊາດ ສັງລວມຕົວເລກແຜນຄາດຄະເນລາຍຮັບງົບປະມານ ຈາກຂະແໜງການຈັດເກັບລາຍຮັບ ແລະ ສັງລວມຕົວເລກແຜນຄາດຄະເນລາຍຈ່າຍງົບປະມານ ຈາກຂະແໜງງົບປະມານແຫ່ງລັດ ຫຼື ຕາມແຜນລາຍຈ່າຍຈາກບັນດາຫົວໜ່ວຍງົບປະມານ ເປັນແຕ່ລະ ເດືອນ, ງວດ, ທົກເດືອນ ແລະ ປີ ເພື່ອເປັນຂໍ້ມູນໃນການບໍລິຫານແຫຼ່ງເງິນຂອງລັດ ແລະ ຈັດຕັ້ງປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ ໃນແຕ່ລະປີ.

4. ວິທີການບໍລິຫານແຫຼ່ງເງິນຂອງລັດ

ເພື່ອຮັບປະກັນການບໍລິຫານແຫຼ່ງເງິນຂອງລັດ ໃຫ້ມີຄວາມຄ່ອງຕົວ ແລະ ທັນຕາມກຳນົດເວລາ ໃຫ້ປະຕິບັດດັ່ງນີ້ :

4.1 ເງິນຢູ່ໃນບັນຊີເງິນຝາກງົບປະມານແຫ່ງລັດ:

- ສັງລວມຍອດເຫຼືອເງິນຢູ່ໃນບັນຊີເງິນຝາກງົບປະມານ ເພື່ອສົມທຽບກັບແຜນຈັດສັນແຫຼ່ງເງິນ; ກໍລະນີຍອດເຫຼືອເງິນຢູ່ໃນບັນຊີເງິນຝາກງົບປະມານແຫ່ງລັດ ບໍ່ສາມາດຕອບສະໜອງກັບແຜນຈັດສັນແຫຼ່ງເງິນ, ຄັງເງິນແຫ່ງຊາດ ສາມາດນຳໃຊ້ແຫຼ່ງເງິນອື່ນທີ່ຢູ່ໃນການຄຸ້ມຄອງຂອງຄັງເງິນແຫ່ງຊາດ ເຊັ່ນ: ບັນຊີເງິນຝາກຮອງຮັບໜີ້ຕ້ອງສົ່ງໃນລະບົບຄັງເງິນ, ເງິນລະດົມທຶນຈາກການຈຳໜ່າຍພັນທະບັດ ແລະ ກູ້ຢືມຈາກແຫຼ່ງອື່ນ ເພື່ອນຳໃຊ້ເຂົ້າໃນການປະຕິບັດ ລາຍຈ່າຍງົບປະມານແຫ່ງລັດ ທີ່ເປັນບູລິມະສິດຂອງລັດຖະບານໂດຍໄດ້ຮັບການເຫັນດີຈາກ ທ່ານລັດຖະມົນຕີ ກະຊວງການເງິນ ເປັນແຕ່ລະໄລຍະ; ພາຍຫລັງທີ່ລາຍຮັບງົບປະມານສາມາດຕອບສະໜອງໄດ້ ຕ້ອງທົດແທນຄືນຕາມຈຳນວນທີ່ໄດ້ຢືມໄປນຳໃຊ້;
- ໃນກໍລະນີທີ່ກະແສເງິນໃນລະບົບຄັງເງິນແຫ່ງຊາດ ມີຫຼາຍກວ່າແຜນຈັດສັນແຫຼ່ງເງິນ; ຄັງເງິນແຫ່ງຊາດ ສະເໜີລັດຖະມົນຕີກະຊວງການເງິນ ພິຈາລະນານຳໃຊ້ເງິນຍອດເຫຼືອ ເພື່ອລົງທຶນດ້ານການເງິນໄລຍະສັ້ນໃນຮູບແບບຕ່າງໆ ເປັນແຕ່ລະໄລຍະ.

4.2 ເງິນຢູ່ໃນບັນຊີເງິນຝາກຮອງຮັບໜີ້ຕ້ອງສົ່ງ:

- ສັງລວມຍອດເງິນໃນບັນຊີເງິນຝາກຮອງຮັບໜີ້ຕ້ອງສົ່ງໃນລະບົບຄັງເງິນໃຫ້ ຄົບຖ້ວນ, ຊັດເຈນ, ຖືກຕ້ອງ ແລະ ຮັບປະກັນການເບີກຈ່າຍຈາກບັນຊີເງິນຝາກຂອງຫົວໜ່ວຍງົບປະມານຜ່ານລະບົບຄັງເງິນແຫ່ງຊາດ ໃຫ້ທັນຕາມກຳນົດເວລາ;
- ຄັງເງິນແຫ່ງຊາດ ສາມາດນຳເອົາໄປລົງທຶນດ້ານການເງິນໄລຍະສັ້ນ ຫຼື ຢືມຊ່ວຍໜູນງົບປະມານແຫ່ງລັດໄດ້ ແຕ່ຕ້ອງໄດ້ຄົ້ນຄວ້າ, ວິໄຈຄວາມສ່ຽງ ແລະ ລາຍງານລັດຖະມົນຕີກະຊວງການເງິນ ເພື່ອພິຈາລະນາຕົກລົງເປັນແຕ່ລະໄລຍະ.

5. ການຄາດຄະເນລາຍຮັບ ແລະ ຈັດສັນແຫຼ່ງເງິນ

5.1 ສັງລວມຍອດເຫຼືອເງິນຢູ່ໃນບັນຊີເງິນຝາກງົບປະມານ ມີສອງຮູບແບບ:

1. ສັງລວມດ້ວຍການສ້າງຕາຕະລາງ Excel:

- ບັນດາທະນາຄານທີ່ໃຫ້ບໍລິການ ສົ່ງບົດລາຍງານຍອດເຫຼືອເງິນຂອງມື້ຜ່ານມາ ໃຫ້ຄັງເງິນແຫ່ງຊາດ ບໍ່ເກີນ 09:00 ໂມງ ຂອງທຸກໆມື້ ດ້ວຍຮູບແບບເອເລັກໂຕຣນິກ;

- ສັງລວມຕົວເລກທີ່ໄດ້ຮັບເຂົ້າໃນຕາຕະລາງ Excel ໂດຍແຍກໃຫ້ເຫັນຍອດເຫຼືອເງິນບ້ວງ ສູນກາງ ແລະ ທ້ອງຖິ່ນ, ແຍກບັນຊີເງິນງົບປະມານ ແລະ ບັນຊີຮອງຮັບໜີ້ຕ້ອງສົ່ງ ອອກເປັນແຕ່ລະສະກຸນເງິນ ກີບ, ໂດລາ ແລະ ບາດ;
- ສັງລວມຍອດເງິນ ເຂົ້າຕາຕະລາງສັງລວມຕົວເລກແຜນຄາດຄະເນລາຍຮັບ ແລະ ຈັດສັນແຫຼ່ງເງິນ ປະຈຳ ອາທິດ ຫຼື ເດືອນ (**ເອກະສານຊ້ອນທ້າຍ 01**) ແລະ ຕາຕະລາງ ແຜນຈັດສັນແຫຼ່ງເງິນ ປະຈຳ ອາທິດ ຫຼື ເດືອນ (**ເອກະສານຊ້ອນທ້າຍ 02**).

2. **ການສັງລວມຍອດເຫຼືອເງິນດ້ວຍລະບົບເອເລັກໂຕຣນິກ**

ແມ່ນການສັງລວມຍອດເຫຼືອເງິນດ້ວຍການນຳໃຊ້ລະບົບຄຸ້ມຄອງການເງິນພາກລັດແບບເອເລັກໂຕຣນິກ ທີ່ເຊື່ອມຕໍ່ກັບລະບົບທະນາຄານ ທີ່ສາມາດຮັບຮູ້ຍອດເຫຼືອເງິນທັງໝົດໄດ້ແບບທັນທີ (Real Time) ຕາມແບບຟອມທີ່ກະຊວງການເງິນກຳນົດ.

### 5.2 ການຄາດຄະເນລາຍຮັບ

- ຄັງເງິນແຫ່ງຊາດ ປະສານສົມທົບກັບຂະແໜງການຈັດເກັບລາຍຮັບ ເພື່ອເອົາຕົວເລກແຜນຄາດຄະເນ ແລະ ຕົວເລກຈັດຕັ້ງປະຕິບັດ ເກັບລາຍຮັບ ເປັນແຕ່ລະ ອາທິດ, ເດືອນ, ງວດ, ຫົກເດືອນ ແລະ ປີ;
- ສັງລວມຕົວເລກຄາດຄະເນລາຍຮັບເຂົ້າໃນຕາຕະລາງສັງລວມຕົວເລກ ແຜນຄາດຄະເນລາຍຮັບ ແລະ ຈັດສັນແຫຼ່ງເງິນເປັນແຕ່ລະ ອາທິດ ຫຼື ເດືອນ.

### 5.3 ການຈັດສັນແຫຼ່ງເງິນ

ການຈັດສັນແຫຼ່ງເງິນ ໃຫ້ປະຕິບັດດັ່ງນີ້:

- ແບ່ງປັນຕົວເລກຕາມເອກະສານເຫັນດີຈ່າຍຈັດເປັນແຕ່ລະພາກລາຍຈ່າຍ, ໂດຍເລັ່ງໃສ່ລາຍຈ່າຍບູລິມະສິດ ແລະ ຮ່ວງລາຍຈ່າຍທີ່ຈຳເປັນຕາມລຳດັບຄວາມສຳຄັນທຽບໃສ່ຄວາມອາດສາມາດໃນການຈ່າຍຕົວຈິງ;
- ຄະນະນຳຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດ ປະຈຳທ້ອງຖິ່ນ ພິຈາລະນາອະນຸມັດ ເພື່ອຈັດຕັ້ງປະຕິບັດ;
- ນຳສົ່ງ ແຜນຈັດສັນແຫຼ່ງເງິນ ໃຫ້ ຄະນະນຳຂັ້ນເທິງຖັດຕົນ ເພື່ອຮັບຊາບ.

## VI. ຄວາມຮັບຜິດຊອບ

ເພື່ອຮັບປະກັນ ໃຫ້ແກ່ການບໍລິຫານແຫຼ່ງເງິນຂອງລັດ ໃນການຄາດຄະເນລາຍຮັບ ແລະ ຈັດສັນແຫຼ່ງເງິນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ບັນດາພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ປະຕິບັດດັ່ງນີ້:

1. **ກົມງົບປະມານແຫ່ງລັດ, ຂະແໜງງົບປະມານທ້ອງຖິ່ນ ແລະ ຫົວໜ່ວຍງົບປະມານ**
   - ກົມງົບປະມານແຫ່ງລັດ ແລະ ຂະແໜງງົບປະມານທ້ອງຖິ່ນ ສະໜອງແຜນ ລາຍຈ່າຍງົບປະມານແຫ່ງລັດໃຫ້ ຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ ເປັນແຕ່ລະ ເດືອນ, ງວດ, ຫົກເດືອນ ແລະ ປີ;
   - ບັນດາຫົວໜ່ວຍງົບປະມານ ສະໜອງແຜນລາຍຈ່າຍທີ່ສະເໜີຂໍອະນຸມັດ ຈາກ ກົມງົບປະມານແຫ່ງລັດ ແລະ ຂະແໜງງົບປະມານແຫ່ງລັດ ຂັ້ນທ້ອງຖິ່ນໃຫ້ ຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ ເປັນແຕ່ລະເດືອນ, ງວດ, ຫົກເດືອນ ແລະ ປີ.
2. **ຂະແໜງການຈັດເກັບລາຍຮັບ ສູນກາງ ແລະ ທ້ອງຖິ່ນ**
   - ສ້າງ ແລະ ສົ່ງແຜນຄາດຄະເນການເກັບລາຍຮັບໃຫ້ ຄັງເງິນແຫ່ງຊາດ ເປັນ ອາທິດ, ເດືອນ, ງວດ, ຫົກເດືອນ ແລະ ປີ;
   - ຊຸກຍູ້, ກວດກາ, ຕິດຕາມ ການຈັດຕັ້ງປະຕິບັດເກັບລາຍຮັບໃຫ້ໄດ້ຕາມແຜນຄາດຄະເນທີ່ຂຶ້ນໄວ້ ເປັນອາທິດ, ເດືອນ, ງວດ, ຫົກເດືອນ ແລະ ປີ.
3. **ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ທີ່ໃຫ້ບໍລິການ**
   - ສະໜອງຂໍ້ມູນການເຄື່ອນໄຫວບັນຊີເງິນຝາກ ໃຫ້ຄັງເງິນແຫ່ງຊາດ ເປັນແຕ່ລະວັນ;

- ສະໜອງຂໍ້ມູນການ ເປີດ-ປິດ ບັນຊີ ຂອງ ບັນດາຫົວໜ່ວຍງົບປະມານ ທີ່ເປີດໄວ້ໃນລະບົບທະນາຄານ ໃຫ້ຄັງເງິນແຫ່ງຊາດ ປີລະຄັ້ງ ເພື່ອເປັນການ ກວດກາ, ຕິດຕາມວຽກງານບັນຊີລວມສູນຄັງເງິນ;
- ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃນການບໍລິການ, ຄຸ້ມຄອງ, ບໍລິຫານແຫຼ່ງເງິນ ແລະ ວຽກງານອື່ນໆ.

4. **ຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດ ປະຈຳທ້ອງຖິ່ນ**

- ຄຸ້ມຄອງ, ຕິດຕາມ ຄາດຄະເນກະແສເງິນ ເຂົ້າ-ອອກ ໃນລະບົບຄັງເງິນແຫ່ງຊາດ ເພື່ອບໍລິຫານແຫຼ່ງເງິນໃຫ້ມີຄວາມຄ່ອງຕົວ;
- ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງເພື່ອຄາດຄະເນລາຍຮັບ ແລະ ຈັດສັນແຫຼ່ງເງິນ ເປັນອາທິດ ຫຼື ເດືອນ ແລະ ສັງລວມລາຍງານ ໃຫ້ຄະນະນຳແຕ່ລະຂັ້ນ;
- ຄົ້ນຄວ້າ, ຄິດໄລ່ ແລະ ວິໄຈຄວາມສ່ຽງ ກ່ຽວກັບ ການນຳໃຊ້ແຫຼ່ງເງິນຂອງລັດ ຢູ່ບັນຊີເງິນຝາກຄັງເງິນ, ເງິນຄ້ຳປະກັນ ແລະ ບັນຊີອື່ນໆ;
- ຄາດຄະເນຄວາມສ່ຽງທີ່ຄາດວ່າ ຂະແໜງຈັດເກັບລາຍຮັບຈະບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນທີ່ຄາດຄະເນໄວ້ ໃນແຕ່ລະອາທິດ ຫຼື ເດືອນ ເພື່ອຮັບປະກັນໃນການຈັດສັນແຫຼ່ງເງິນ;
- ຕິດຕາມ, ກວດກາ ວຽກງານບັນຊີລວມສູນຄັງເງິນ ໃນການເປີດ-ປິດບັນຊີ ຂອງ ບັນດາຫົວໜ່ວຍງົບປະມານ ທີ່ເປີດໄວ້ໃນລະບົບທະນາຄານ ປີລະຄັ້ງ;

- ໃນກໍລະນີ ຄັງເງິນແຫ່ງຊາດ ປະຈຳທ້ອງຖິ່ນ ຂາດສະພາບຄ່ອງ ຕ້ອງໄດ້ຢືມເງິນ ຈາກບັນຊີຮອງຮັບໜີ້ຕ້ອງສົ່ງ ເພື່ອຕອບສະໜອງລາຍຈ່າຍງົບປະມານແຫ່ງລັດ ທີ່ເປັນບູລິມະສິດ ຂອງລັດຖະບານ ໃຫ້ທັນຕາມກຳນົດເວລາ ຕ້ອງໄດ້ນຳສະເໜີເຖິງຄັງເງິນແຫ່ງຊາດ ກະຊວງການເງິນ ພິຈາລະນາ ອະນຸມັດ; ສຳລັບການນຳເງິນໄປ ລົງທຶນດ້ານການເງິນໄລຍະສັ້ນ ໃນຮູບແບບຕ່າງໆ ແມ່ນບໍ່ອະນຸຍາດໃຫ້ ຄັງເງິນແຫ່ງຊາດ ປະຈຳທ້ອງຖິ່ນ ຈັດຕັ້ງປະຕິບັດ.

## VII. ການຈັດຕັ້ງປະຕິບັດແລະ ຜົນສັກສິດ

1. ມອບໃຫ້ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ, ຂະແໜງການຈັດເກັບລາຍຮັບ ປະສານສົມທົບກັບ ພາກສ່ວນກ່ຽວຂ້ອງ ພ້ອມກັນຈັດຕັ້ງ, ເຜີຍແຜ່, ແນະນຳ, ຜັນຂະຫຍາຍ ຄຳແນະນຳ ສະບັບນີ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ;
2. ມອບໃຫ້ຄັງເງິນແຫ່ງຊາດປະຈຳທ້ອງຖິ່ນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດການບໍລິຫານແຫຼ່ງເງິນໃຫ້ມີປະສິດທິຜົນ;
3. ຄຳແນະນຳ ສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງການເງິນ ລັດຖະມົນຕີ

ສັນຕິ ດວງດີ